สาທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ ເລກທີ ....58........ /ນຍ

ດຳລັດ

ວ່າດ້ວຍການຄຸ້ມຄອງການລົງທຶນຂອງລັດ..

------------------

- ອີງຕາມກົດໝາຍວ່າດ້ວຍ ລັດຖະບານແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເລກທີ 01/95, ລົງວັນທີ 8 ມີນາ 1995;
- ອີງຕາມກົດໝາຍວ່າດ້ວຍງົບປະມານສະບັບເລກທີ 05/94, ລົງວັນທີ 18/07/1994;
- ອີງຕາມການສະເໜີຂອງປະທານຄະນະກຳມະການແຜນການ ແລະ ການຮ່ວມມື.

ນາຍົກລັດຖະມົນຕີ ອອກດຳລັດ :

<u>ໝວດທີ I</u>

ວ່າດ້ວຍຫລັກການທົ່ວໄປ

<u>ມາດຕາ 1</u>. ຈຸດປະສົງ.

ດຳລັດສະບັບນີ້ມີຈຸດປະສົງເພື່ອກຳນົດຫລັກການພື້ນຖານ, ຂອບເຂດສິດແລະຄວາມຮັບຜິດຊອບຂອງບັນດາອົງການຈັດຕັ້ງລັດ, ພາກສ່ວນຕ່າງໆທີ່ກ່ຽວຂ້ອງກັບການຄຸ້ມຄອງໂຄງການລົງທຶນຂອງລັດ, ປະກອບສ່ວນຮັກສາສະຖຽນລະພາບທາງດ້ານເສດຖະກິດມະຫາພາກ, ຮັບປະກັນໃຫ້ການລົງທຶນຂອງລັດມີປະສິດທິຜົນສູງ, ເປັນການກະຕຸກຊຸກຍູ້ການພັດທະນາເສດຖະກິດ-ສັງຄົມໃຫ້ຂະຫຍາຍຕົວຢ່າງຕໍ່ເນື່ອງແລະຮັບປະກັນການປົກປັກຮັກສາສິ່ງແວດລ້ອມ.

<u>ມາດຕາ 2</u>. ນິຍາມການລົງທຶນຂອງລັດ.

ການລົງທຶນຂອງລັດ ແມ່ນການນຳໃຊ້ງົບປະມານຂອງລັດ ຊຶ່ງປະກອບດ້ວຍແຫລ່ງທຶນພາຍໃນ, ທຶນກູ້ຢືມ ແລະ ທຶນຊ່ວຍເຫລືອລ້າຈາກຕ່າງປະເທດ ເຂົ້າໃນການກະກຽມ, ຈັດຕັ້ງປະຕິບັດແລະນຳໃຊ້ບັນດາໂຄງການລົງທຶນຂອງລັດ ຕາມແຜນພັດທະນາເສດຖະກິດ-ສັງຄົມ ທີ່ໄດ້ຮັບຮອງເອົາແຕ່ລະໄລຍະ.

ມາດຕາ 3 ເປົ້າໝາຍການລົງທຶນຂອງລັດ.

ເປົ້າໝາຍການລົງທຶນຂອງລັດປະກອບດ້ວຍ.

1. ການກໍ່ສ້າງໃໝ່ບູລະນະສອມແປງໃຫ່ຍບັນດາໂຄງສ້າງພື້ນຖານວັດຖຸເຕັກນິກຂອງລັດ
2. ການສະໜອງວັດຖຸອຸປະກອນກົນຈັກພາຫານະ ແລະ ຊັບສິນ.
3. ການສ້າງແຜນແມ່ບົດພັດທະນາເສດຖະກິດສັງຄົມລະດັບຊາດແຜນແມ່ບົດພັດທະນາຂະແໜງການ.
4. ການສົ່ງເສີມວິຊາການເກັບກຳຂໍ້ມູນສຶກສາຄວາມເປັນໄປໄດ້ສຳຫຼວດແບບຝຶກອົບຮົມຄົ້ນຄ້ວາວິທະຍາສາດເຕັກໂນໂລຢີພັດທະນາຊັບພະຍາກອນມະນຸດ ແລະ ສົ່ງເສີມການຜະລິດ.

- ກິດຈະການໃດ ໂຄງການໃດ ທີ່ມີຄວາມຈຳເປັນ ແລະ ພາກສ່ວນເສດຖະກິດອື່ນມີຄວາມສົນໃຈເຮັດ ລັດສົ່ງເສີມໃຫ້ພາກສ່ວນເສດຖະກິດອື່ນ ລົງທຶນເພື່ອປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ແລະ ຫຼຸດຜ່ອນການລົງທຶນໂດຍກົງຂອງລັດ.

ມາດຕາ 4 ເງື່ອນໄຂພື້ນຖານເພື່ອຕົກລົງເອົາໂຄງການເຂົ້າໃນແຜນການລົງທຶນຂອງລັດ.

ເງື່ອນໄຂພື້ນຖານເພື່ອຕົກລົງເອົາໂຄງການເຂົ້າໃນແຜນການລົງທຶນຂອງລັດ.

1. ໂຄງການລົງທຶນຂອງລັດຕ້ອງສອດຄ່ອງກັບ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດແຜນງົບປະມານຂອງລັດ ມີປະສິດທິຜົນດ້ານເສດຖະກິດສັງ-ຄົມ ແລະ ຮັບປະກັນການປົກປັກຮັກສາສິ່ງແວດລ້ອມແບບຍືນຍົງ
2. ໂຄງການທີ່ມີເອກະສານຄົບຊຸດ ຕາມເງື່ອນໄຂທີ່ກຳນົດໄວ້ ໃນລະບຽບການຄຸ້ມຄອງການລົງທຶນຂອງລັດ.
3. ໂຄງການໄດ້ຮັບການຕົກລົງເຫັນດີຈາກຜູ້ມີສິດອຳນາດຕາມທີ່ໄດ້ກຳນົດໄວ້ໃນມາດຕາ 9 ຂອງດຳລັດສະບັບນີ້.
4. ໂຄງການກູ້ຢືມ ແລະຊ່ວຍເຫຼືອລ້າຈາກຕ່າງປະເທດທີ່ໄດ້ເຊັນສັນຍາຮັບເອົາຢ່າງເປັນທາງການແລ້ວ.

ມາດຕາ 5 ການຈັດແບ່ງປະເພດຂອງໂຄງການລົງທຶນຂອງລັດ.

ໂຄງການລົງທຶນຂອງລັດແບ່ງອອກເປັນ 3 ປະເພດດັ່ງນີ້:

- ໂຄງການປະເພດ 1: ແມ່ນໂຄງການຄະໜາດໃຫ່ຍ ມີມູນຄ່າລວມເກີນ 50 ຕື້ກີບຫຼືຫຼາຍກ່ວາ 5 ລ້ານໂດລາສະຫະລັດ
- ໂຄງການປະເພດ 2: ແມ່ນໂຄງການຄະໜາດກາງ ມີມູນຄ່າລວມເກີນ 5 ຕື້ກີບເຖິງ 50 ຕື້ກີບຫຼືຫຼາຍກ່ວາ 5 ແສນໂດລາສະຫະລັດ ເຖິງ 5 ລ້ານໂດລາສະຫະລັດ
- ໂຄງການປະເພດ 3 ແມ່ນໂຄງການຂະໜາດນ້ອຍ ມີມູນຄ່າລວມບໍ່ເກີນ 5 ຕື້ກີບ ຫຼື ບໍ່ເກີນ 5 ແສນໂດລາສະຫະລັດ ແລະມີອາຍຸປະຕິບັດໂຄງການບໍ່ເກີນ 2 ປີ.

ມາດຕາ 6 ການສ້າງ ແລະ ສະຫຼູບລາຍງານ ການປະຕິບັດແຜນການລົງທຶນຂອງລັດ. ໃນຕົ້ນເດືອນພຶດສະພາຂອງທຸກປີປະທານຄະນະກຳມະການແຜນການ ແລະ ການຮ່ວມມືອອກບົດແນະນຳ ກ່ຽວກັບການສ້າງແຜນພັດທະນາເສດຖະກິດ-ສັງຄົງ ແລະ ແຈ້ງຕົວເລກດ້ານການລົງທຶນຂອງລັດປະຈຳປີໃຫ້ບັນດາຂະແໜງການ ແລະ ທ້ອງຖິ່ນ

ກ່ອນວັນທີ 15 ເດືອນມິຖຸນາ ຂອງທຸກໆປີ. ຂະແໜງການ ແລະ ທ້ອງຖິ່ນ ຈັດລຽງບຸລິມະສິດໂຄງການ ຕາມເພດານທຶນທີ່ໄດ້ແຈ້ງໃຫ້ ແລ້ວສົ່ງເຖິງຄະນະກຳມະການແຜນການ ແລະການຮ່ວມມື ເພື່ອສັງລວມ ແລະ ນຳສະເໜີກອງປະຊຸມລັດຖະບານພິຈາລະນາຕົກລົງໃນກາງເດືອນກໍລະກົດ ແລ້ວນຳສະເໜີຕໍ່ກອງປະຊຸມສະພາແຫ່ງຊາດເພື່ອພິຈາລະນາຮັບຮອງເອົາ.

ບົນພື້ນຖານມະຕິຕົກລົງຂອງສະພາແຫ່ງຊາດ, ນາຍົກລັດຖະມົນຕີ ອອກດຳລັດປະກາດໃຊ້ ແຜນພັດທະນາເສດຖະກິດ-ສັງຄົມ ໃນແຕ່ລະໄລຍະ. ປະທານຄະນະກຳມະການແຜນການ ແລະການຮ່ວມມື ອອກບົດແນະນຳຈັດຕັ້ງປະຕິບັດ ໃນເດືອນຕຸລາ.

ຂະແໜງການ ແລະທ້ອງຖິ່ນ ສະຫລຸບລາຍງານ ສະພາບການປະຕິບັດແຜນການ ແລະໂຄງການລົງທຶນຂອງລັດ ແລ້ວສົ່ງໃຫ້ຄະນະກຳມະການແຜນການ ແລະການຮ່ວມມື ເປັນປົກກະຕິ ຕາມລະບຽບການທີ່ປະທານຄະນະກຳມະການແຜນການ ແລະການຮ່ວມມມ ໄດ້ກຳນົດ.

ມາດຕາ 7. ການຄາດຄະເນຄ່າໃຊ້ຈ່າຍບໍລິຫານປົກກະຕິ ຂອງໂຄງການລົງທຶນຂອງລັດ.

ທຸກໆໂຄງການລົງທຶນຂອງລັດ ທີ່ມີມູນຄ່າເກີນ 1ຕື້ກີບ ຕ້ອງໄດ້ຄາດຄະເນຄ່າໃຊ້ຈ່າຍບໍລິຫານປົກກະຕິ (ຄ່າບູລະນະສ້ອມແປງແລະດຳເນີນງານ)ຂອງໂຄງການແລ້ວສະເໜີພ້ອມກັບການຂໍອານຸມັດໂຄງການ.

ມາດຕາ 8: ການຄຸ້ມຄອງໂຄງການກູ້ຢືມ ແລະຊ່ວຍເຫລືອລ້າຈາກຕ່າງປະເທດ

ການຄຸ້ມຄອງໂຄງການການກູ້ຢືມແລະຊ່ວຍເຫລືອລ້າຈາກຕ່າງປະເທດ,ນອກຈາກປະຕິບັດຕາມດຳລັດວ່າດ້ວຍການກູ້ຢືມ ແລະ ຊ່ວຍເຫລືອລ້າຈາກຕ່າງປະເທດແລ້ວໃຫ້ປະຕິບັດຕາມດຳລັດສະບັບນີ້.

## ໝວດທີ່ II

## ວ່າດ້ວຍອົງການທີ່ມີສິດ ໃນການອະນຸມັດ ແລະ ຄຸ້ມຄອງໂຄງການລົງທຶນຂອງລັດ

ມາດຕາ 9: ອົງການທີ່ມີສິດອະນຸມັດໃຫ້ເອົາໂຄງການລົງທຶນຂອງລັດເຂົ້າແຜນ.

ອົງການທີ່ມີສິດອະນຸມັດໃຫ້ເອົາໂຄງການເຂົ້າໃນແຜນການການລົງທຶນຂອງລັດປະຈຳປີແລະ 5 ປີ ມີດັ່ງນີ້:

- ນາຍົກລັດຖະມົນຕີ ເປັນຜູ້ຕົກລົງອະນຸມັດໂຄງການປະເພດ 1 ຕາມການເຫັນດີຈາກກອງປະຊຸມລັດຖະບານ. ໂດຍການສະເໜີຂອງປະທານຄະນະກຳມະການແຜນການແລະການຮ່ວມມື.
- ປະທານຄະນະກຳມະການແຜນການແລະການຮ່ວມມືເປັນຜູ້ຕົກລົງອະນຸມັດໂຄງການປະເພດ 2 ຕາມການສະເໜີ ຂອງລັດຖະມົນຕີ,ຫົວໜ້າອົງການທຽບເທົ່າ,ເຈົ້າແຂວງ,ເຈົ້າຄອງກຳແພງນະຄອນ ແລະ ຫົວໜ້າ ເຂດພິເສດ.
- ລັດຖະມົນຕີ,ຫົວໜ້າອົງການທຽບເທົ່າ,ເຈົ້າແຂວງ,ເຈົ້າຄອງກຳແພງນະຄອນ ແລະ ຫົວໜ້າເຂດພິເສດ, ເປັນຜູ້ຕົກລົງອະນຸມັດໂຄງການປະເພດ 3 ຕາມການສະເໜີຂອງກົມກອງ, ອຳນາດການປົກຄອງ ທີ່ຂຶ້ນກັບຕົນ.

ມາດຕາ 10 : ຄວາມຮັບຜິດຊອບຂອງບັນດາອົງການຄຸ້ມຄອງຕໍ່ແຜນການລົງທຶນຂອງລັດ.

1. ລັດຖະບານ:

ນາຍົກລັດຖະມົນຕີຕາງໜ້າລັດຖະບານເປັນຜູ້ອອກຄຳສັ່ງສ້າງແລະປະກາດໃຊ້ແຜນພັດທະນາເສດຖະກິດ-ສັງ ຄົມລວມທັງແຜນການລົງທຶນຂອງລັດປະຈຳປີ ແລະ 5 ປີ.

ອີງຕາມບັນຊີໂຄງການລົງທຶນທີ່ຄະນະກຳມະການແຜນການແລະການຮ່ວມມືສັງລວມມາສະເໜີ, ລັດຖະບານພິຈາລະນາຕົກລົງແຜນການລົງທຶນຂອງລັດປະຈຳປີ, ປະຈຳ5ປີ ເພື່ອນຳສະເໜີຕໍ່ສະພາແຫ່ງຊາດພິຈາລະນາ ແລະ ຮັບຮອງເອົາ.

ລັດຖະບານຮັບຜິດຊອບຈັດຕັ້ງປະຕິບັດ ແລະ ລາຍງານຜົນຂອງການປະຕິບັດແຜນການດັ່ງກ່າວຕໍ່ກອງປະຊຸມສະພາແຫ່ງຊາດ.

ສຳລັບໂຄງການຂະໜາດໃຫຍ່,ມີລັກສະນະຍຸດທະສາດ ຫຼື ມີມູນຄ່າຫລາຍກວ່າ 250 ຕື້ກີບ ( 25 ລ້ານໂດລາສະຫະລັດ) ລັດຖະບານຈະນຳສະເໜີສະພາແຫ່ງຊາດ ເປັນຜູ້ພິຈາລະນາຕົກລົງອານຸມັດເປັນແຕ່ລະໂຄງການ.

2. <u>ຄະນະກຳມະການແຜນການ ແລະ ການຮ່ວມມື</u> ( ຄຜຮ ):

ເປັນຜູ້ຄົ້ນຄວ້າ,ປັບປຸງແລະແນະນຳການປະຕິບັດລະບຽບການຄຸ້ມຄອງໂຄງການລົງທຶນຂອງລັດ,ຈັດຕັ້ງເຜີຍແຜ່ແນະນຳວິທີການສ້າງແຜນການລົງທຶນຂອງລັດ,ຈັດຕັ້ງປະຕິບັດໂຄງການ,ກວດກາຕິດຕາມປະເມີນຜົນ ແລະ ສະຫຼຸບລາຍງານຜົນການລົງທຶນຂອງລັດຕໍ່ລັດຖະບານ.

ກຳນົດແລະຈັດແບ່ງເພດານທຶນຂອງລັດໃຫ້ບັນດາຂະແໜງການແລະທ້ອງຖິ່ນໂດຍອີງໃສ່ແຜນຍຸດທະສາດການພັດທະນາເສດຖະກິດ-ສັງຄົມຂອງລັດຖະບານ, ແຈ້ງລາຍລະອຽດກ່ຽວກັບເພດານດັ່ງກ່າວໃຫ້ແຕ່ລະຂະແໜງການ ແລະ ທ້ອງຖິ່ນກ່ອນສ້າງແຜນການປະຈຳປີ ແລະ 5 ປີ .

ຄົ້ນຄ້ວາ,ວິໄຈ,ສັງລວມແລະຕັດສິນ ແຜນການລົງທຶນຂອງລັດປະຈຳປີ ແລະ 5ປີ ຂອງຂະແໜງການ, ທ້ອງຖິ່ນ ແລະ ນຳສະເໜີລັດຖະບານພິຈາລະນາອານຸມັດ,ສະເໜີດັດແກ້ແຜນ 6 ເດືອນ( ຖ້າເຫັນມີຄວາມຈຳເປັນ ), ແຜນການ 5 ປີ ແລະ ສະເໜີລັດຖະບານສັ່ງໂຈະໂຄງການທີ່ບໍ່ມີປະສິດທິຜົນ.

3. <u>ກະຊວງການເງິນ</u>.

ບົນພື້ນຖານຄວາມເປັນເອກະພາບກັບຄະນະກຳມະການແຜນການແລະການຮ່ວມມື, ກະຊວງການເງິນຈັດແບ່ງງົບປະມານລວມເຂົ້າໃນການລົງທຶນປະຈຳປີ,5ປີໃຫ້ສອດຄ່ອງກັບແຫລ່ງທຶນ, ເງື່ອນໄຂຂອງເສດຖະກິດມະຫາພາກແລະລະພາບການພັດທະນາເສດຖະກິດ-ສັງຄົມຂອງປະເທດ,ຈັດຕັ້ງແລະຄຸ້ມຄອງການປະມູນໂຄງການຕາມລະບຽບການ.

ກະຊວງການເງິນເປັນຜູ້ຮັບຜິດຊອບການຊຳລະເງິນໃຫ້ແຕ່ລະໂຄງການ ເມື່ອໂຄງການໄດ້ປະຕິບັດສຳເລັດຕາມຂັ້ນຕອນທີ່ ໄດ້ກຳນົດແລ້ວ ແລະ ເຂົ້າຮ່ວມໃນການຕິດຕາມກວດກາໂຄງການ.

4. <u>ບັນດາກະຊວງ, ຂະແໜງການ</u>..

ບັນດາກະຊວງ, ອົງການ ມີໜ້າທີ່ຄຸ້ມຄອງມະຫາພາກຕໍ່ໂຄງການ, ກຳນົດມາດຖານ, ກຳນົດໝາຍດ້ານເຕັກນິກ,ກຳນົດໝາຍການຄິດໄລ່ລາຄາຫົວໜ່ວຍ, ແນະນຳ, ຄຸ້ມຄອງຕິດຕາມກວດກາດ້ານເຕັກນິກ,ຜົນກະທົບທາງດ້ານສັງຄົມ ແລະ ສິ່ງແວດລ້ອມ ຂອງໂຄງການທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນຕາມລະບຽບການທີ່ກຳນົດໄວ້: ຈັດລຽງບູລິມະສິດ, ຄຸ້ມຄອງ ແລະຈັດຕັ້ງປະຕິບັດໂດຍກົງບັນດາໂຄງການທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ.

ສຳຫຼັບໂຄງການຂະໜາດໃຫຍ່, ມີລັກສະນະເຕັກນິກສັບສົນ, ມີລັກສະນະຍຸດທະສາດກວມລວມ ແລະ ພົວພັນເຖິງຫຼາຍຂະແໜງການ ແລະ ຫຼາຍເຂດແຂວງ ແມ່ນໃຫ້ຂັ້ນສູນກາງເປັນຜູ້ຈັດຕັ້ງປະຕິບັດ ແລະ ຄຸ້ມຄອງໂດຍກົງ ໂດຍປະສານສົມທົບກັບທ້ອງຖິ່ນທີ່ກ່ຽວຂ້ອງ.

5. <u>ອຳນາດການປົກຄອງແຂວງ, ກຳແພງນະຄອນ, ເຂດພິເສດ.</u>

ອຳນາດການປົກຄອງແຂວງ, ກຳແພງນະຄອນແລະເຂດພິເສດກຳນົດຍຸດທະສາດການພັດທະນາ ແລະ ຈັດລຽງໂຄງການບູລິມະສິດໂດຍໃຫ້ສອດຄ່ອງກັບລັກສະນະ, ຈຸດພິເສດ ແລະ ທ່າແຮງດ້ານເສດຖະກິດ-ສັງຄົມຂອງທ້ອງຖິ່ນຕົນ, ຄຸ້ມຄອງ ແລະ ຕິດຕາມບັນດາໂຄງການລົງທຶນຂອງລັດທີ່ຕົນຮັບຜິດຊອບ.

ຮັບປະກັນຄວາມປອດໄພ, ປົກປັກຮັກສາສິ່ງແວດລ້ອມ ແລະ ອຳນວຍຄວາມສະດວກໃຫ້ແກ່ການປະຕິບັດໂຄງການລົງທຶນຂອງລັດຢູ່ທ້ອງຖິ່ນຕົນ.

ເຂົ້າຮ່ວມໃນການກະກຽມ, ສ້າງ, ຈັດຕັ້ງປະຕິບັດແລະຕິດຕາມ, ກວດກາ, ຄຸ້ມຄອງນຳໃຊ້ໂຄງການລົງທຶນຂອງລັດທີ່ຂຶ້ນກັບຂັ້ນສູນກາງຄຸ້ມຄອງເຊິ່ງຕັ້ງຢູ່ພື້ນທີ່ຂອງຕົນໃຫ້ມີປະສິດທິຜົນ.

6. <u>ອຳນາດການປົກຄອງເມືອງ</u> :

ອຳນາດການປົກຄອງເມືອງ ສ້າງໂຄງການລົງທຶນຕາມແຜນງານບູລິມະສິດຂອງແຂວງກຳນົດໃຫ້, ໂດຍສອດຄ່ອງກັບລັກສະນະ, ຈຸດພິເສດ, ທີ່ຕັ້ງ ແລະທ່າແຮງຂອງເມືອງຕົນ, ນຳສະເໜີແຂວງພິຈາລະນາອະນຸມັດເອົາເຂົ້າແຜນບັນດາໂຄງການທີ່ເມືອງເປັນຜູ້ສ້າງ ແລະ ຄຸ້ມຄອງໂດຍກົງ.

ເຂົ້າຮ່ວມກະກຽມໂຄງການ, ກວດກາຄຸ້ມຄອງ, ປ້ອງກັນແລະອຳນວຍຄວາມສະດວກໃຫ້ການເຄື່ອນໄຫວບັນດາໂຄງການທີ່ຂຶ້ນ ກັບແຂວງ ແລະ ສູນກາງຄຸ້ມຄອງທີ່ຕັ້ງຢູ່ພື້ນທີ່ເມືອງຕົນ.

. ຈັດຕັ້ງຊີ້ນຳບັນດາບ້ານ, ເຂດຈຸດສຸມໃຫ້ເຂົ້າຮ່ວມສະເໜີ, ສ້າງ, ປະຕິບັດແລະ ຄຸ້ມຄອງກວດກາໂຄງການລົງທຶນຂອງລັດທີ່ຕັ້ງຢູ່ພື້ນທີ່ເມືອງຕົນໃຫ້ສອດຄ່ອງກັບທິດທາງແຜນນະໂຍບາຍ ແລະ ເປົ້າໝາຍບູລິມະສິດຂອງການລົງທຶນ.

7. <u>ອຳນາດການປົກຄອງບ້ານ</u>:

ເຂົ້າຮ່ວມປະກອບຄຳເຫັນໃຫ້ແກ່ການສ້າງແລະປະຕິບັດໂຄງການລົງທຶນຂອງລັດທີ່ຕັ້ງຢູ່ພື້ນທີ່ບ້ານຕົນ, ປົກປັກຮັກສາສິ່ງແວດລ້ອມ, ສະໜອງຂໍ້ມູນຂ່າວສານທີ່ຈຳເປັນ ແລະ ອຳນວຍຄວາມສະດວກໃຫ້ແກ່ການສ້າງ ແລະ ປະຕິບັດໂຄງ ການລົງທຶນຂອງລັດທີ່ຕັ້ງຢູ່ພື້ນທີ່ບ້ານຕົນ.

ສຳລັບໂຄງການທີ່ລັດກັບປະຊາຊົນພ້ອມກັນເຮັດ, ບ້ານຕ້ອງແຕ່ງຕັ້ງຕົວແທນຂອງບ້ານຕົນເຂົ້າຮ່ວມເປັນຄະນະ ຮັບຜິດຊອບໂຄງການ.

<u>ມາດຕາ 11</u>. ຂອບເຂດສິດ, ໜ້າທີ່ແລະຄວາມຮັບຜິດຊອບຂອງເຈົ້າຂອງໂຄງການ.

ເຈົ້າຂອງໂຄງການມີສິດ, ໜ້າທີ່ແລະຄວາມຮັບຜິດຊອບດັ່ງຕໍ່ໄປນີ້:

- ສ້າງໂຄງການ, ກຳນົດແຫຼ່ງທຶນ, ປະຕິບັດຕາມລະບຽບການຄຸ້ມຄອງການລົງທຶນຂອງລັດ ແລະ ນຳສະເໜີໃຫ້ອົງການຂັ້ນເທິງພິຈາລະນາອານຸມັດ.
- ມີຄວາມຮັບຜິດຊອບຢ່າງເຕັມສ່ວນຕໍ່ການຄຸ້ມຄອງນຳໃຊ້ທຶນນັບແຕ່ຂອດກະກຽມໂຄງການຈົນຮອດຂອດຄຸ້ມຄອງນຳໃຊ້.

ຖ້າແມ່ນໂຄງການກູ້ຢືມທີ່ສາມາດເກັບກູ້ທຶນຄືນຕ້ອງຮັບຜິດຊອບຊໍາລະໜີ້ສິນໃຫ້ຖືກຕ້ອງຕາມສັນຍາ. ຖ້າມີການປ່ຽນແປງເຈົ້າຂອງໂຄງການ,ຜູ້ທີ່ຖືກແຕ່ງຕັ້ງ ຫລື ມອບໝາຍໃຫ້ຮັບຜິດຊອບໃໝ່ ຕ້ອງໄດ້ມີຄວາມຮັບຜິດຊອບສືບທອດຕໍ່ໜ້າວຽກ,ພັນທະແລະສິດໜ້າທີ່ທຸກຢ່າງຂອງຜູ້ກ່ອນ.

ຈັດຕັ້ງຫລືສະເໜີແຕ່ງຕັ້ງຄະນະຮັບຜິດຊອບໂຄງການຫລືວ່າຈ້າງຊ່ຽວຊານທີ່ຊໍານານງານມາເປັນຜູ້ຈັດການໂຄງການ ຫລື ເປັນທີ່ປຶກສາໂຄງການ,ເຂົ້າຮ່ວມເຈລະຈາຫລືເຈລະຈາໂດຍກົງ ແລະ ເຊັນສັນຍາກັບຜູ້ຮັບເໝົາໂຄງການຕາມລະບຽບການທີ່ກໍານົດໄວ້.

ປະກາດແຈ້ງການເຖິງບັນດາອົງການ,ກົມກອງ,ອໍານາດການປົກຄອງທີ່ມີສ່ວນກ່ຽວພັນໃນຂອບເຂດທີ່ຕັ້ງໂຄງການເພື່ອສະເໜີໃຫ້ພາກສ່ວນຕ່າງໆເຫຼົ່ານັ້ນເຂົ້າຮ່ວມໃນການຄຸ້ມຄອງ ແລະ ຈັດຕັ້ງປະຕິບັດໂຄງການ.

<u>ມາດຕາ 12</u>. ສິດ,ໜ້າທີ່ ແລະ ຄວາມຮັບຜິດຊອບຂອງອົງການທີ່ປຶກສາໂຄງການລົງທຶນຂອງລັດ.

ອົງການທີ່ປຶກສາໂຄງການລົງທຶນຂອງລັດແມ່ນບັນດາການຈັດຕັ້ງວິຊາຊີບໜຶ່ງ,ເຄື່ອນໄຫວຖືກຕ້ອງຕາມກົດໝາຍ,ເປັນນິຕິບຸກຄົນ, ມີການລົງທະບຽນດໍາເນີນທຸລະກິດດ້ານທີ່ປຶກສາໂຄງການລົງທຶນຕາມກົດໝາຍກໍານົດໄວ້.

- <u>ສິດ,ໜ້າທີ່ ແລະ ຄວາມຮັບຜິດຊອບຂອງທີ່ປຶກສາໂຄງການມີດັ່ງນີ້</u> :

- ຕອບສະໜອງຂໍ້ມູນຂ່າວສານດ້ານນະໂຍບາຍ, ລະບຽບກົດໝາຍໃຫ້ເຈົ້າຂອງໂຄງການ, ຮ່າງເອກະສານການປະມູນໂຄງການ, ການຄວບຄຸມຕິດຕາມການປະຕິບັດໂຄງການຈົນສໍາເລັດ ແລະ ມອບຮັບໂຄງການ. ທີ່ປຶກສາໂຄງການລົງທຶນສາມາດເຊັນສັນຍາພາງ ຫລື ສໍາພັນທຸລະກິດກັບອົງການທີ່ປຶກສາອື່ນເພື່ອປະຕິບັດ ແລະ ຄຸ້ມຄອງໂຄງການຮ່ວມກັນ.

- ທີ່ປຶກສາໂຄງການຮັບຜິດຊອບຕໍ່ໜ້າກົດໝາຍ, ຕໍ່ເຈົ້າຂອງໂຄງການໃນການປະຕິບັດສັນຍາທີ່ໄດ້ເຊັນກັນກັບ ເຈົ້າຂອງໂຄງການ,ກ່ອນຈະເລີ່ມລົງມືປະຕິບັດໂຄງການທີ່ປຶກສາຕ້ອງໄດ້ກວດສອບແບບແຜນເຕັກນິກທີ່ຖືກຮັບຮອງ, ກວດຄືນໃບປະເມີນລາຄາກໍ່ສ້າງ,ລາຄາຫົວໜ່ວຍ,ມາດຖານເຕັກນິກແລະກໍານົດໝາຍອື່ນໆທີ່ພົວພັນເຖິງໂຄງການແລະ ອະທິ ບາຍໃຫ້ເຈົ້າຂອງໂຄງການຮັບຊາບ.

- ເວລາປະຕິບັດໂຄງການ, ທີ່ປຶກສາຕ້ອງໄດ້ຕິດຕາມກວດກາຄວບຄຸມເປັນປະຈໍາ ເພື່ອສັງເກດຕີລາຄາຄວາມຄືບ ໜ້າຂອງໂຄງການ,ເກັບກໍາສະພາບການປ່ຽນແປງລັກສະນະແລະປໍລິມາດຂອງໜ້າວຽກ ແລະ ລາຍງານໃຫ້ເຈົ້າຂອງໂຄງການເປັນປົກກະຕິ.

- ໃນໄລຍະປະຕິບັດໂຄງການ,ຫາກຜູ້ຮັບເໝົາບໍ່ປະຕິບັດຕາມແບບແຜນເຕັກນິກ ຫລື ຂັ້ນຕອນຂອງການດໍາເນີນໂຄງການທີ່ປຶກສາມີສິດຕັກເຕືອນແລະສັ່ງໃຫ້ປະຕິບັດຢ່າງເຂັ້ມງວດ;ກໍລະນີມີຄວາມຈໍາເປັນກໍສາມາດສັ່ງມ້າງອັນເຮັດບໍ່ຖືກແລ້ວເຮັດຄືນຕາມສັນຍາ ແລະ ແຜນຜັງທີ່ໄດ້ກໍານົດ.

- ຫລັງຈາກໂຄງການສໍາເລັດ,ທີ່ປຶກສາມີສິດກວດຄືນທັງໝົດປໍລິມາດວຽກທີ່ປະຕິບັດ, ສະຫລຸບຕີລາຄາ ແລະ ລາຍງານໃຫ້ເຈົ້າຂອງໂຄງການ,ເຮັດໜັງສືຄໍ້າປະກັນເພື່ອສະແດງຄວາມຮັບຜິດຊອບຕໍ່ເຈົ້າຂອງໂຄງການ. ໃນກໍລະນີກິດຈະການຫາກມີການເປ່ເພເສັຍຫາຍໃນໄລຍະເວລາຄໍ້າປະກັນຍ້ອນສາເຫດທີ່ປຶກສາໂຄງການຂາດຄວາມຮັບຜິດຊອບ. ຄ່າລົ້ມເປືອງ ຫລື. ມູນຄ່າການເສັຍຫາຍດັ່ງກ່າວຕ້ອງແມ່ນທີ່ປຶກສາເປັນຜູ້ຮັບຜິດຊອບທັງໝົດ.

- ຂະແໜງການກ່ຽວຂ້ອງຂອງລັດຈະເປັນຜູ້ກໍານົດລະອຽດຕື່ມກ່ຽວກັບປະເພດ, ຮູບການ, ມູນຄ່າ ແລະ ຄ່າບໍລິການດ້ານທີ່ປຶກສາ.

ມາດຕາ 13. ສິດ,ໜ້າທີ່ແລະຄວາມຮັບຜິດຊອບຂອງຜູ້ຮັບເໝົາກໍ່ສ້າງແລະບໍລິການໂຄງການລົງທຶນຂອງລັດ.

- ຜູ້ຮັບເໝົາໂຄງການມີຄວາມຮັບຜິດຊອບຕໍ່ໜ້າກົດໝາຍ ແລະ ຕໍ່ເຈົ້າຂອງໂຄງການໃນການປະຕິບັດສັນຍາທີ່ໄດ້ເຊັນກັນກັບເຈົ້າຂອງໂຄງການ.ປະຕິບັດລະບອບຄໍ້າປະກັນຄຸນນະພາບກິດຈະການໂຄງການ ຫລືວັດຖຸອຸປະກອນ,ເຄື່ອງຈັກ,ເຄື່ອງມືທີ່ຕົນໄດ້ກໍ່ສ້າງ,ຕິດຕັ້ງ ຫລື ສະໜອງ.

- ຜູ້ຮັບເໝົາມີສິດປຶກສາຫາລືກັບເຈົ້າຂອງໂຄງການກ່ຽວກັບການດັດແກ້ແບບແຜນຜັງເຕັກນິກການກໍ່ສ້າງ ທີ່ເຫັນວ່າບໍ່ເໝາະສົມ.

-ກໍລະນີການປະຕິບັດໂຄງການຫາກເຫັນວ່າມີການເພີ່ມໜ້າວຽກເຮັດໃຫ້ມູນຄ່າໂຄງການເພີ່ມຂຶ້ນຍ້ອນສາເຫດຜູ້ຮັບເໝົາກໍ່ສ້າງບໍ່ປະຕິບັດຕາມແບບແຜນຜັງເຕັກນິກທີ່ຖືກຮັບຮອງເອົາໂດຍບໍ່ໄດ້ຮັບການເຫັນດີຈາກເຈົ້າຂອງໂຄງການນັ້ນແມ່ນຜູ້ຮັບເໝົາກໍ່ສ້າງເປັນຜູ້ຮັບຜິດຊອບທັງໝົດມູນຄ່າເພີ່ມ.ຖ້າແມ່ນຍ້ອນຜູ້ສຳຫຼວດອອກແບບມີການຄິດໄລ່ເກີນບໍລິມາດຕາມມາດຖານເຕັກນິກທີ່ໄດ້ກຳນົດໄວ້,ຜູ້ສຳຫລວດອອກແບບຕ້ອງຖືກປັບໃໝ 20% ຂອງມູນຄ່າເກີນ.

<u>ມາດຕາ 14</u>: ຄະນະຮັບຜິດຊອບຄຸ້ມຄອງໂຄງການ.

ທຸກໆໂຄງການລົງທຶນຂອງລັດ ຕ້ອງໄດ້ຈັດຕັ້ງຄະນະຮັບຜິດຊອບໂຄງການໂດຍອີງຕາມຂະໜາດ ແລະ ລັກສະ ນະຂອງໂຄງການ.

ຄະນະຮັບຜິດຊອບໂຄງການແຕ່ງຕັ້ງໂດຍຫົວໜ້າອົງການເຈົ້າຂອງໂຄງການ ຫຼື ຜູ້ມີສິດຕົກລົງອະນຸມັດໂຄງການດັ່ງກ່າວ. ເພື່ອເປັນຕົວແທນໃຫ້ເຈົ້າຂອງໂຄງການໃນການຈັດຕັ້ງຄຸ້ມຄອງໂຄງການ.

ຄະນະຮັບຜິດຊອບໂຄງການມີຄວາມຮັບຜິດຊອບຕໍ່ເຈົ້າຂອງໂຄງການ ແລະ ຕໍ່ໜ້າກົດໝາຍ. ສຳລັບໂຄງການຂະໜາດໃຫຍ່ ທີ່ມີລັກສະນະກ່ວມລວມຫລາຍຂະແໜງການ ແລະ ຫລາຍເຂດແຂວງນັ້ນ. ຄະນະຮັບຜິດຊອບໂຄງການຕ້ອງປະກອບດ້ວຍຕົວແທນຂອງອົງການເຈົ້າຂອງໂຄງການ. ຕົວແທນຂອງອົງການແຜນການແລະການຮ່ວມມື,ຕົວແທນຂອງອົງການການເງິນ,ຕົວແທນຂອງຂະແໜງການຄຸ້ມຄອງດ້ານເຕັກນິກ ແລະ ຕົວແທນຂອງອຳນາດການປົກຄອງທ້ອງຖິ່ນທີ່ໂຄງການຕັ້ງຢູ່.ໂດຍແມ່ນລັດຖະບານເປັນຜູ້ແຕ່ງຕັ້ງຕາມການສະເໜີຂອງອົງການເຈົ້າຂອງໂຄງການ.

ຄະນະຮັບຜິດຊອບໂຄງການເປັນຜູ້ກະກຽມງົບປະມານໂຄງການເພື່ອສົ່ງລວມເຂົ້າແຜນລົງທຶນປະຈຳປີ, ສະຫລຸບລາຍງານປະຈຳງວດ, ປະ ຈຳ 6 ເດືອນ ແລະ ປະຈຳປີ ໂດຍສົມທຽບຂໍ້ມູນກັບອົງການການເງິນ ແລະ ຜູ້ໃຫ້ທຶນ (ຖ້າແມ່ນໂຄງການກູ້ຢືມ ແລະ ຊ່ວຍເຫລືອລ້າຈາກຕ່າງປະເທດ)ແລ້ວລາຍງານໃຫ້ເຈົ້າຂອງໂຄງການ, ຄະນະກຳມະການແຜນການ ແລະ ການຮ່ວມມື,ກະຊວງ ການເງິນ ແລະ ພາກສ່ວນກ່ຽວຂ້ອງ.

## <u>ໝວດທີ III</u>

## ວ່າດ້ວຍການກະກຽມໂຄງການລົງທຶນຂອງລັດ.

ມາດຕາ 15. ການກະກຽມໂຄງການລົງທຶນຂອງລັດ.

ເນື້ອໃນຕົ້ນຕໍຂອງການກະກຽມໂຄງການລົງທຶນຂອງລັດມີດັ່ງນີ້:

- ສຶກສາຄົ້ນຄວ້າຄວາມຈຳເປັນທີ່ຕ້ອງມີການລົງທຶນ. ກຳນົດລັກສະນະ ແລະ ຂະໜາດຂອງໂຄງການ.

- ຄົ້ນຄວ້າແຫລ່ງສະໜອງວັດສະດຸ, ອຸປະກອນ ແລະ ເຄື່ອງປະກອບເຕັກນິກໃຫ້ແກ່ໂຄງການ, ຄົ້ນຄວ້າຄວາມສາມາດຂອງແຫລ່ງທຶນ,ປະສິດທິຜົນຂອງການລົງທຶນແລະເລືອກເຟັ້ນຮູບແບບການລົງທຶນ.

- ດຳເນີນການສຳຫລວດ,ສືບ ຄົ້ນ,ສຶກສາ ແລະ ເລືອກເຟັ້ນສະຖານທີ່ຕັ້ງຂອງໂຄງການການລົງທຶນ.

- ສ້າງບົດສະເໜີໂຄງການສຳຫຼັບໂຄງການປະເພດ3, ສ້າງບົດວິພາກເສດຖະກິດ-ເຕັກນິກ ສຳຫຼັບໂຄງການປະເພດ 1 ແລະ ປະເພດ 2.

-ນຳສົ່ງເອກະສານໂຄງການເຖິງຜູ້ມີສິດອຳນາດຕົກລົງອານຸມັດການລົງທຶນ,ອົງກອນປະເມີນຜົນໂຄງການ ແລະ ອົງກອນຜູ້ໃຫ້ທຶນ ( ຖ້າແມ່ນໂຄງການນຳໃຊ້ດ້ວຍແຫລ່ງທຶນກູ້ຢືມຫລືຊ່ວຍເຫລືອລ້າ ).

<u>ມາດຕາ 16</u>. ມູນຄ່າລວມຂອງໂຄງການລົງທຶນ:

ມູນຄ່າລວມຂອງໂຄງການປະກອບດ້ວຍ: ຄ່າໃຊ້ຈ່າຍໃນການກະກຽມໂຄງການ, ການກະກຽມປະຕິບັດໂຄງການ, ການປະຕິບັດໂຄງການ(ຄ່າວັດຖຸອຸປະກອນ ແລະ ຄ່າແຮງງານ), ຄ່າໃຊ້ຈ່າຍທົດລອງນຳໃຊ້(ຖ້າມີ), ຄ່າໃຊ້ຈ່າຍບໍລິຫານປົກກະຕິ,ດອກເບັ້ຍເງິນກູ້(ສຳຫຼັບໂຄງການກູ້ຢືມ),ຄ່າໃຊ້ຈ່າຍສຸກເສີນ( ຖ້າມີ ),ຄ່າອາກອນ, ທຳນຽມອື່ນໆ.

ມາດຕາ 17. ການປະເມີນຜົນໂຄງການລົງທຶນຂອງລັດ:

ທຸກໆໂຄງການລົງທຶນຂອງລັດລ້ວນແຕ່ຕ້ອງມີການປະເມີນຜົນ. ການປະເມີນຜົນໂຄງການລົງທຶນຂອງລັດຕ້ອງດຳເນີນໄປດ້ວຍ3ໄລຍະຄື:ໄລຍະກ່ອນປະຕິບັດ(ກ່ອນເອົາເຂົ້າແຜນການລົງທຶນຂອງລັດ),ໄລຍະກຳລັງປະຕິບັດ,ໄລຍະຫລັງສຳເລັດໂຄງການ.

## ໝວດທີ IV
## ວ່າດ້ວຍການປະຕິບັດໂຄງການລົງທຶນຂອງລັດ

ມາດຕາ 18. ການປະມູນໂຄງການ.

ບັນດາໂຄງການລົງທຶນຂອງລັດເຊັ່ນ: ການກໍ່ສ້າງ,ການຕິດຕັ້ງ,ການສ້ອມແປງໃຫຍ່,ການສຳຫລວດຂະໜາດໃຫຍ່,ການຂຸດຄົ້ນຊັບພະຍາກອນ,ການຈັດຊື້ວັດຖຸ,ອຸປະກອນ,ເຄື່ອງປະກອບ,ເຄື່ອງກົນຈັກລ້ວນແຕ່ຕ້ອງມີການປະມູນຕາມດຳລັດເລກທີ 95/ນຍ,ລົງວັນທີ 05/12/95 ວ່າດ້ວຍການຈັດຊື້ສິນຄ້າ,ການກໍ່ສ້າງສ້ອມແປງ ແລະການບໍລິການດ້ວຍທຶນຂອງລັດ ແລະ ລະບຽບການກ່ຽວກັບການຈັດຕັ້ງປະຕິບັດດຳລັດວ່າດ້ວຍການຈັດຊື້ສິນຄ້າ,ການກໍ່ສ້າງ,ສ້ອມແປງແລະການບໍລິການດ້ວຍທຶນຂອງລັດເລກທີ2642/ກງ,ລົງວັນທີ 21/09/1996. ຖ້າມີການປັບປຸງດັດແກ້ດຳລັດແລະລະບຽບການດັ່ງກ່າວ,ແມ່ນໃຫ້ປະຕິບັດຕາມການປັບປຸງປ່ຽນແປງດັ່ງກ່າວນັ້ນ.

<u>ມາດຕາ 19</u>. ເງື່ອນໄຂໃນການເລີ້ມລົງມືປະຕິບັດໂຄງການລົງທຶນຂອງລັດ.

ກ່ອນເລີ້ມລົງມືປະຕິບັດທຸກໆໂຄງການລົງທຶນຂອງລັດຕ້ອງມີເງື່ອນໄຂດັ່ງນີ້:

- ຕ້ອງນອນຢູ່ໃນແຜນງານບູລິມະສິດຂອງຂະແໜງການ ແລະ ທ້ອງຖິ່ນ, ເປັນໂຄງການທີ່ນອນໃນແຜນການລົງທຶນປະຈຳປີແລະມີແຫລ່ງທຶນອັນແນ່ນອນທີ່ສະພາແຫ່ງຊາດໄດ້ຮັບຮອງເອົາແລ້ວ.

- ຕ້ອງມີບົດສະເໜີ ຫລື ບົດວິພາກເສດຖະກິດ-ເຕັກນິກຂອງໂຄງການ,ມີການປະເມີນຜົນໂຄງການ,ຖ້າແມ່ນໂຄງການກໍ່ສ້າງ,ຕ້ອງມີການສຳຫລວດ-ອອກແບບແຜນຜັງເຕັກນິກຄົບຖ້ວນ.

- ຕ້ອງມີທີ່ປຶກສາ ຫລື ວິຊາການທີ່ຊຳນານງານເພື່ອຄຸ້ມຄອງໂຄງການເປັນຕົ້ນແມ່ນໂຄງການໃນປະເພດ 1 ແລະ ປະເພດ 2.

- ຕ້ອງມີສັນຍາເຊັນກັນລະຫວ່າງເຈົ້າຂອງໂຄງການກັບຜູ້ຮັບເໝົາໂດຍຖືກຕ້ອງຕາມລະບຽບການ.

ມາດຕາ 20. ການສຳລະສະສາງມູນຄ່າໂຄງການລົງທຶນຂອງລັດ.

ການສຳລະສະສາງຄ່າໂຄງການແມ່ນອີງໃສ່ມູນຄ່າຂອງໂຄງການທີ່ປະຕິບັດສຳເລັດ ແລະ ໄດ້ກວດຮັບກັນຢ່າງຖືກຕ້ອງຄົບຖ້ວນ ຕາມສັນຍາທີ່ໄດ້ເຊັນກັນ.

ມາດຕາ 21. ການແກ້ໄຂເຫດການຕ່າງໆຂອງກິດຈະການ.

ເຈົ້າຂອງໂຄງການເປັນເຈົ້າການລົມທົບກັບຜູ້ຮັບເໝົາເພື່ອຈັດຕັ້ງກຳລັງຄົນ,ພາຫະນະທີ່ຈຳເປັນ ແລະຄົ້ນຄ້ວາວາງມາດຕະການເພື່ອປ້ອງກັນ,ແກ້ໄຂເຫດການຕ່າງໆ ທີ່ອາດເກີດຂຶ້ນຢ່າງມີຄວາມຮັບຜິດຊອບ.

ໃນກໍລະນີມີເຫດການທີ່ບໍ່ເພິ່ງປາຖະໜາໃດໜຶ່ງເກີດຂຶ້ນ,ກໍ່ຄວາມເສຍຫາຍໃຫ້ກິດຈະການນັ້ນ ຕ້ອງໄດ້ມີການຈັດຕັ້ງຄະນະກຳມະການໜຶ່ງຂຶ້ນຊຶ່ງປະກອບດ້ວຍຕົວແທນຈາກພາກສ່ວນທີ່ກ່ຽວຂ້ອງ ແລະ ເຈົ້າໜ້າທີ່ທາງການເພື່ອສອບສວນ,ຊອກຫາ ແລະ ກຳນົດສາເຫດໃຫ້ແຈ້ງ.

## ໝວດທີ V

## ວ່າດ້ວຍການສຳເລັດ ແລະ ມອບຮັບໂຄງການລົງທຶນຂອງລັດ.

ມາດຕາ 22. ການກວດຮັບ ແລະມອບຮັບໂຄງການ:

- ເມື່ອໂຄງການປະຕິບັດສຳເລັດຢ່າງສົມບູນ ພາຍຫຼັງໄດ້ທົດລອງ ຫຼື ແນະນຳການນຳໃຊ້ໄລຍະນຶ່ງ(ຖ້າມີ) ແລ້ວ. ຜູ້ຮັບເໝົາຕ້ອງໄດ້ມອບຄືນໃຫ້ເຈົ້າຂອງໂຄງການ.ຫລັງຈາກໂຄງການສຳເລັດຢ່າງຊ້າ15ວັນ.ເຈົ້າຂອງໂຄງການຕ້ອງໄດ້ຈັດຕັ້ງກວດຮັບຕາມປະລິມານແລະຄຸນະພາບ.ແບບແຜນທີ່ຖືກຮັບຮອງເອົາ ແລະ ຕາມສັນຍາທີ່ໄດ້ເຊັນກັນ.
- ເຈົ້າຂອງໂຄງການສະເໜີຂັ້ນທີ່ມີສິດອຳນາດແຕ່ງຕັ້ງຄະນະວິຊາການກວດຮັບໂຄງການເຊິ່ງປະກອບດ້ວຍຕົວແທນຈາກອົງການແຜນການ.ການເງິນ.ອົງການຄຸ້ມຄອງເຕັກນິກ.ເຈົ້າຂອງໂຄງການ.ບໍລິສັດຮັບເໝົາ. ຊ່ຽວຊານທີ່ປຶກສາ ຫລື ວິຊາການຄຸ້ມໂຄງການເພື່ອກວດຄືນທັງໝົດແຕ່ລະດ້ານຂອງກິດຈະການ ແລ້ວຈຶ່ງມອບຮັບເປັນທາງການລະຫວ່າງຜູ້ຮັບເໝົາກັບເຈົ້າຂອງໂຄງການ.
- ເວລາມອບຮັບກິດຈະການໃຫ້ເຈົ້າຂອງໂຄງການ. ຜູ້ຮັບເໝົາຕ້ອງໄດ້ມອບເອກະສານທຸກຢ່າງທີ່ກ່ຽວຂ້ອງເຖິງໂຄງການແລະເຮັດບົດບັນທຶກການກວດຮັບ ແລະ ມອບຮັບກິດຈະການໃຫ້ເຈົ້າຂອງໂຄງການນຳໃຊ້ເຂົ້າໃນການສະຫລຸບບັນຊີ ການລົງທຶນແລະ ນຳໃຊ້ໂຄງການ.
- ສຳລັບໂຄງການພັດທະນາເຂດຕົວເມືອງໃໝ່. ເມື່ອສຳເລັດການກໍ່ສ້າງແລ້ວ. ເຈົ້າຂອງໂຄງການຕ້ອງມອບເອກະສານທັງໝົດ ແລະ ມອບກິດຈະການໃຫ້ແກ່ອຳນາດການປົກຄອງທ້ອງ ຖິ່ນສືບຕໍ່ຄຸ້ມຄອງແລະນຳໃຊ້.

ມາດຕາ 23. ການສຳເລັດໂຄງການການລົງທຶນ.

- ການເຄື່ອນໄຫວລົງທຶນໄດ້ສຳເລັດລົງເມື່ອກິດຈະການທັງໝົດໄດ້ຖືກມອບຄືນໃຫ້ແກ່ເຈົ້າຂອງໂຄງການ.

- ພາຍຫລັງໄດ້ກວດຮັບກິດຈະການລົງທຶນສຳເລັດແລ້ວ. ເຈົ້າຂອງໂຄງການຕ້ອງໄປຈົດທະບຽນຊັບສິນບັດຂອງຕົນຕາມລະບຽບກົດໝາຍ.ເອກະສານທີ່ປະກອບໄປຈົດທະບຽນຊັບສິນບັດແມ່ນບົດບັນທຶກລັງລວມເອກະສານຂອງການກວດຮັບກິດຈະການທັງໝົດ.

ມາດຕາ 24. ການແນະນຳແລະທົດລອງນຳໃຊ້ໂຄງການ:

- ພາຍຫລັງໄດ້ຮັບໂຄງການແລ້ວ,ເຈົ້າຂອງໂຄງການມີໜ້າທີ່ນຳໃຊ້ແລະຈັດຕັ້ງການຄຸ້ມຄອງ,ຖ້າມີຄວາມຈຳເປັນອາດມີການທົດລອງສາກ່ອນຈຶ່ງນຳໃຊ້.

- ເຈົ້າຂອງໂຄງການຫລືອົງກອນທີ່ຖືກມອບໝາຍໃຫ້ຄຸ້ມຄອງນຳໃຊ້ໂຄງການມີໜ້າທີ່ນຳໃຊ້ ແລະ ບົວລະບັດຮັກສາໂຄງການຕາມການແນະນຳຂອງຜູ້ຮັບເໝົາໂຄງການຫຼືອົງການຄຸ້ມຄອງດ້ານເຕັກນິກທີ່ກ່ຽວຂ້ອງ.

<u>ມາດຕາ 25</u>. ການຄ້ຳປະກັນໂຄງການ.

- <u>ການຄ້ຳປະກັນສັນຍາຮັບເໝົາ</u>:

  - ທຸກໆໂຄງການກໍ່ສ້າງ,ສ້ອມແປງ,ຕິດຕັ້ງ ຫລື ຈັດຊື້ດ້ວຍທຶນຂອງລັດ. ກ່ອນຈະລົງມືປະຕິບັດຜູ້ຮັບເໝົາ. ຜູ້ສະໜອງ. ຜູ້ບໍລິການ ຕ້ອງວາງເງິນຄ້ຳປະກັນ ຫລື ເອີ້ນວ່າ "ເງິນມັດຈຳສັນຍາປະຕິບັດໂຄງການ " ໃຫ້ເຈົ້າຂອງໂຄງການ.

  -ໄລຍະເວລາຄ້ຳປະກັນສັນຍາແມ່ນຄິດໄລ່ແຕ່ມື້ເຊັນສັນຍາຮັບເໝົາໂຄງການຈົນກ່ວາໂຄງການໄດ້ປະຕິບັດສຳເລັດ ແລະ ມອບຮັບກິດຈະການເປັນທີ່ຮຽບຮ້ອຍ.

  - ເມື່ອໝົດອາຍຸສັນຍາຄ້ຳປະກັນ ແລະ ຜູ້ຮັບເໝົາປະຕິບັດສັນຍາຖືກຕ້ອງຄົບຖ້ວນແລ້ວເງິນມັດຈຳດັ່ງກ່າວຕ້ອງສົ່ງຄືນໃຫ້ຜູ້ຮັບເໝົາທັງໝົດ.

- ການຄ້ຳປະກັນໂຄງການ :

  - ທຸກໂຄງການກໍ່ສ້າງ,ສ້ອມແປງ,ຕິດຕັ້ງ ຫລື ຈັດຊື້ດ້ວຍທຶນຂອງລັດຫລັງຈາກປະຕິບັດສຳເລັດແລ້ວຜູ້ຮັບເໝົາຕ້ອງມີການວາງເງິນຄ້ຳປະກັນເພື່ອສະແດງຄວາມຮັບຜິດຊອບຕໍ່ຄຸນນະພາບຂອງການກໍ່ສ້າງ,ສ້ອມແປງ,ຕິດຕັ້ງ ຫລື ວັດຖຸອຸປະກອນທີ່ຕົນໄດ້ສະໜອງໃຫ້ເຈົ້າຂອງໂຄງການ.

  -ໄລຍະຄ້ຳປະກັນໂຄງການແມ່ນໄລ່ແຕ່ມື້ຜູ້ຮັບເໝົາມອບກິດຈະການຫລືມອບວັດຖຸອຸປະກອນທີ່ຕົນສະໜອງໃຫ້ເຈົ້າຂອງໂຄງການຕາມກຳນົດຄ້ຳປະກັນພາຍໃນ 12 ເດືອນ.

- ກຳນົດອັດຕາຄ້ຳປະກັນ :

  - ເງິນຄ້ຳປະກັນສັນຍາຮັບເໝົາໂຄງການແມ່ນ 10% ຂອງມູນຄ່າໃນສັນຍາ.

  - ເງິນຄ້ຳປະກັນໂຄງການ ແມ່ນ 10 % ຂອງມູນຄ່າຕົວຈິງຂອງໂຄງການ.

  - ເງິນຄ້ຳປະກັນສັນຍາ ແລະ ຄ້ຳປະກັນໂຄງການຈະບໍ່ໄດ້ຄິດໄລ່ດອກເບ້ຍ.

  - ເງິນຄ້ຳປະກັນດັ່ງກ່າວຕ້ອງວາງເປັນເງິນສົດ ຫລື ມີໜັງສືຄ້ຳປະກັນຈາກທະນາຄານທີ່ໜ້າເຊື່ອຖື. ສຳລັບເງິນຄ້ຳປະກັນໂຄງການສາມາດຫັກເອົາຄ່າຮັບເໝົາຝາກໄວ້ຢູ່ຄັງເງິນແຫ່ງຊາດ.ຜູ້ຮັບເໝົາບໍ່ມີສິດນຳໃຊ້ເງິນຄ້ຳປະກັນດັ່ງກ່າວໃນໄລຍະຄ້ຳປະກັນ.ເມື່ອໝົດອາຍຸຄ້ຳປະກັນແລ້ວ ຫາກກິດຈະການທີ່ຄ້ຳປະກັນບໍ່ມີບັນຫາຫຍັງເຈົ້າຂອງໂຄງການຕ້ອງສົ່ງເງິນຄືນໃຫ້ຜູ້ຮັບເໝົາ.

  - ໃນໄລຍະຄ້ຳປະກັນຖ້າຜູ້ຮັບເໝົາມີການລະເມີດສັນຍາ ຫລື ກິດຈະການມີການເປ່ເພເສຍຫາຍ.ຍ້ອນຜູ້ຮັບເໝົາເຮັດບໍ່ຮັບປະກັນຄຸນນະພາບ.ເຈົ້າຂອງໂຄງການຈະຍຶດເອົາເງິນຄ້ຳປະກັນໄວ້. ຜູ້ຮັບເໝົາຕ້ອງ

ໄດ້ແປງຄືນໃຫ້ດີ. ຫາກກໍລະນີຜູ້ຮັບເໝົາບໍ່ຍອມປະຕິບັດສັນຍາ ຫລື ບໍ່ຍອມແປງຄືນໃຫ້ດີ.ເຈົ້າຂອງໂຄງການຈະບໍ່ສົ່ງເງິນຄ້ຳປະກັນຄືນໃຫ້ຜູ້ຮັບເໝົາ.

- ກໍລະນີຜູ້ຮັບເໝົາເປັນຜູ້ລົງທຶນກ່ອນ ແລະ ໄລຍະປອດໜີ້ເທົ່າກັບ ຫຼື ຫຼາຍກວ່າໄລຍະຄ້ຳປະກັນຕາມການກຳນົດໃນວັກສອງ, ມາດຕາ25ຂອງດຳລັດສະບັບນີ້ແມ່ນຈະບໍ່ມີການວາງເງິນຄ້ຳປະກັນໂຄງການ.

ມາດຕາ 26. ການສະຫລຸບຂາດຕົວບັນຊີທຶນໂຄງການ:

- ທຸກໆໂຄງການການລົງທຶນຂອງລັດຫລັງຈາກໄດ້ປະຕິບັດສຳເລັດ ແລະ ຊຳລະສະສາງແລ້ວ ເຈົ້າຂອງໂຄງການຕ້ອງໄດ້ສະຫລຸບຂາດຕົວບັນຊີງົບປະມານໂຄງການຢ່າງຊ້າສຸດແມ່ນ3 ເດືອນນັບແຕ່ໂຄງການສຳເລັດ ແລະ ນຳສະເໜີເຖິງອົງການທີ່ມີສິດຕົກລົງອະນຸມັດໂຄງການ.

- ສຳລັບໂຄງການທີ່ປະກອບດ້ວຍຫລາຍແຫລ່ງທຶນແຕກຕ່າງກັນຕ້ອງໃດ້ສະຫລຸບລາຍງານໃຫ້ຈະແຈ້ງແຕ່ລະ ແຫລ່ງທຶນ.

- ການສະຫລຸບຂາດຕົວບັນຊີໂຄງການຕ້ອງໃຫ້ຖືກຕ້ອງ,ຄົບຖ້ວນ. ຊັດເຈນຈຳນວນທຶນທີ່ນຳໃຊ້ໃນແຕ່ລະໄລຍະ,ມູນຄ່າວັດຖຸອຸປະກອນ ຫລື ຊັບສິນບັດແຕ່ລະຢ່າງທີ່ຖືກນຳໃຊ້ເຂົ້າໃນໂຄງການ ແລ້ວສັງລວມມູນຄ່າທັງໝົດຂອງໂຄງການ.

- ກະຊວງການເງິນສົມທົບກັບຄະນະກຳມະການແຜນການ ແລະ ການຮ່ວມມື ແນະນຳແບບຟອມ.ເນື້ອໃນ.ວິທີ ກວດສອບ.ກວດຜ່ານການສະຫລຸບຂາດຕົວບັນຊີງົບປະມານໂຄງການລົງທຶນ.

## ໝວດທີ VI

## ວ່າດ້ວຍການກວດກາ ແລະ ມາດຕະການຕໍ່ຜູ້ລະເມີດ

ມາດຕາ 27. ການກວດກາໂຄງການລົງທຶນຂອງລັດ.

ໂດຍອີງໃສ່ຂະໜາດ ແລະ ຄວາມສຳຄັນຂອງໂຄງການ. ທຸກໂຄງການລົງທຶນຂອງລັດລ້ວນແຕ່ຕ້ອງມີການຈັດຕັ້ງຕິດຕາມ.ກວດກາຕາມລະບຽບການກວດກາ ໂດຍເລີ້ມແຕ່ຂອດກະກຽມໂຄງການຈົນຮອດຂອດສຳເລັດ ແລະ ນຳໃຊ້ໂຄງການ.

ມາດຕາ 28. ມາດຕະການຕໍ່ຜູ້ລະເມີດ.

- ບຸກຄົນ.ນິຕິບຸກຄົນ ຫຼື ການຈັດຕັ້ງໃດຫາກລະເມີດດຳລັດສະບັບນີ້ຈະຖືກລົງໂທດດ້ວຍວິທີການສຶກສາອົບຮົມ. ຕັກເຕືອນ.ປະຕິບັດວິໄນຕາມລະບຽບການລັດຖະກອນ,ປັບໃໝ ຫຼືແລ່ະ ລົງໂທດຕາມກົດໝາຍ.

- ໃນກໍລະນີການລະເມີດດຳລັດສະບັບນີ້ຫາກເປັນການກະທຳຜິດທາງອາຍາເຊັ່ນ: ປອມແປງເອກະສານ.ໃຊ້ອຳນາດເກີນຂອບເຂດຈະຖືກດຳເນີນຄະດີຕາມກົດໝາຍອາຍາ.

## <u>ໝວດທີ VII</u>

## ບົດບັນຍັດສຸດທ້າຍ.

ມາດຕາ 29. ທຸກໂຄງການລົງທຶນຂອງລັດຕ້ອງປະຕິບັດຕາມດຳລັດສະບັບນີ້ແລະປະຕິບັດຕາມລະບຽບຫລັກການອື່ນໆ ທີ່ທາງການປະກາດໃຊ້.

ມາດຕາ 30. ການຈັດຕັ້ງປະຕິບັດ.

ມອບໃຫ້ປະທານຄະນະກຳມະການແຜນການແລະການຮ່ວມມືອອກຂໍ້ກຳນົດ,ບົດແນະນຳກ່ຽວກັບວິທີການ ແລະມາດຕະການລະອຽດເພື່ອຈັດຕັ້ງປະຕິບັດດຳລັດສະບັບນີ້ ແລະມີໜ້າທີ່ຕິດຕາມກວດກາການຈັດຕັ້ງປະຕິບັດຕົວຈິງຕາມພາລະບົດບາດຂອງຕົນ.

ມາດຕາ 31. ຜົນສັກສິດ.

ດຳລັດສະບັບນີ້ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ. ເນື້ອໃນຂອງດຳລັດ, ຂໍ້ຕົກລົງ,ຄຳສັ່ງ, ຂໍ້ກຳນົດ, ກົດລະບຽບທີ່ປະກາດໃຊ້ໃນເມື່ອກ່ອນ, ຖ້າເຫັນວ່າອັນໃດ,ຂໍ້ຄວາມໃດຫາກ ຂັດກັບດຳລັດສະບັບນີ້ ແມ່ນໃຫ້ນຳໃຊ້ຂໍ້ກຳ ນົດຂອງດຳລັດສະບັບນີ້ ເປັນຂໍ້ບັງຄັບປ່ຽນແທນ.

ວຽງຈັນ, ວັນທີ 22 ພຶດສະພາ 2002.

ເຊັນແທນ ນາຍົກລັດຖະມົນຕີ

( ຮອງນາຍົກລັດຖະມົນຕີ )



ອາຊາງ ລາວລີ